# ຄູ່ມືແນະນຳກ່ຽວກັບການປະເມີນຄວາມຕ້ອງການ ແລະ ການເອື້ອອຳນວຍ ການຈັດຕັ້ງກຸ່ມຊາວກະສິກອນ




ໂຄງການສົ່ງເສີມກະສກຳ ແລະ ປ່າໄມ້ (LEAP)

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ (NAFES)

## ກໍລະກົດ, 2011

**ກ. ຄວາມເປັນມາ**

ກອງສົ່ງເສີມ, ກະຊວງກະສິກຳ ແລະ ປ່າໄມ້, ມີບົດບາດໃນການໃຫ້ການບໍລິການການສົ່ງເສີມຜ່ານຮູບແບບສົ່ງເສີມຂອງລາວ. ຂະແໜງກະສິກຳໂດຍສະເພາະແມ່ນຢູ່ໃນຊົນນະບົດຫ່າງໄກສອກຫຼີກແມ່ນກຳລັງຢູ່ໃນໄລຍະຜ່ານຈາກການຜະລິດເພື່ອຄ້ຳປະກັນສະບຽງອາຫານໄປສູ່ການຜະລິດເປັນສິນຄ້າເຊິ່ງມີການປ່ຽນແປງດ້ານຕະຫຼາດທີ່ກຳລັງມີທ່າແຮງຫຼາຍດ້ານ. ໂຄງການສົ່ງເສີມກະສິກຳສະໜັບສະໜູນກະຊວງກະສິກຳ ແລະ ປ່າໄມ້ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມດ້ວຍການນຳໃຊ້ຮູບແບບສົ່ງເສີມທີ່ມີຈຸດສຸມ “Hotspots” ເພື່ອຕອບສະໜອງຕາມຄວາມຕ້ອງການຕົວຈິງຂອງຊາວກະສິກອນ. ຮູບແບບການສົ່ງເສີມຂອງລາວ LEA+ ໄດ້ຖືກນຳສະເໜີໃນ ເຮືອນສົ່ງເສີມ LEA+ ດັ່ງຕໍ່ໄປນີ້.




ການຈັດຕັ້ງປະຕິບັດ LEA+ ແມ່ນອີງໃສ່ພື້ນຖານຫຼັກການສົ່ງເສີມກະສິກຳດັ່ງທີ່ສະແດງຢູ່ໃນເຮືອນສົ່ງເສີມ LEA+. ການກຳນົດຄວາມຕ້ອງການຂອງຊາວກະສິກອນໃນການຈັດຕັ້ງກຸ່ມເພື່ອສະໜອງການບໍລິການສົ່ງເສີມໃຫ້ແທດເໝາະກັບຄວາມຕ້ອງການຕົວຈິງໃນປະຈຸບັນ, ເຄື່ອງມືການນຳໃຊ້ນີ້ໄດ້ຖືກປັບດັດມາຈາກເຄື່ອງມືສົ່ງເສີມພື້ນຖານຂອງລາວ, ເຄື່ອງມືນີ້ປະກອບມີ:

1. ການກຳນົດອຸປະສັກ ແລະ ໂອກາດຂອງຜະລິດຕະພັນ/ຫົວຂໍ້ທີ່ເລືອກ
2. ການປະເມີນຄວາມຕ້ອງການໃນການສົ່ງເສີມດ້ານຕ່າງໆໃນຫົວຂໍ້ທີ່ໄດ້ຄັດເລືອກ
3. ເອື້ອອຳນວຍການຈັດຕັ້ງກຸ່ມອີງໃສ່ຄວາມຕ້ອງການທີ່ໄດ້ປະເມີນ

ຂ້າງລຸ່ມນີ້ແມ່ນການສະແດງເຄື່ອງມືທີ່ເປັນທາງເລືອກໃໝ່ກັບເຄື່ອງມືສົ່ງເສີມພື້ນຖານຂອງລາວ.

| | ຮູບແບບສົ່ງເສີມພື້ນຖານ (LEA) | LEA + (ການສົ່ງເສີມແບບຈຸດສຸມ) | ຈຸດປະສົງ |
|---|---|---|---|
| 1 | ການວິເຄາະສະຖານະພາບບ້ານ VLA | ການວິເຄາະສະຖານະພາບບ້ານ VLA<br>ການວິເຄາະຕະຫຼາດແບບເລັ່ງລັດ RMA | ວິເຄາະສະຖານະພາບ/ເສດຖະກິດສັງຄົມໃນບ້ານເປົ້າໝາຍ<br>ເພື່ອວິເຄາະຄວາມຕ້ອງການຂອງຕະຫຼາດ (ລາຄາ, ຄວາມຕ້ອງການ-ຄວາມສາມາດສະໜອງ ຕະຫຼາດແລະຄຸນນະພາບຂອງສິນຄ້າ) ແລະ ບູລິມະສິດໃນການຜະລິດ |
| 2 | ກອງປະຊຸມກຸ່ມບ້ານ KBM | ກອງປະຊຸມກຸ່ມບ້ານ KBM | ເພື່ອລິເລີ່ມລະບົບສົ່ງເສີມຂັ້ນບ້ານແລະເປັນກຳນົດຜະລິດຕະພັນທີ່ມີທ່າແຮງເພື່ອສົ່ງເສີມ |
| 3 | ການປະເມີນຄວາມຕ້ອງການ (TNA – KISS) | ການປະເມີນຄວາມຕ້ອງການ (TNA – KISS) | ກຳນົດອຸປະສັກແລະໂອກາດໃນການສົ່ງເສີມຫົວຂໍ້/ຜະລິດຕະພັນທີ່ໄດ້ຄັດເລືອກ |
| 4 | ຈັດຕັ້ງກຸ່ມຮຽນຮູ້ | ປະເມີນຄວາມຕ້ອງການ NA | ກຳນົດຄວາມຕ້ອງການ(ການຝຶກແລະການບໍລິການອື່ນໆ)ເພື່ອແກ້ໄຂບັນຫາ ແລະ ສົ່ງເສີມຕາມໂອກາດທີ່ໄດ້ກຳນົດ |
| 5 | ວິເຄາະອຸປະສັກ (ພັດທະນາຫຼັກສູດ) | ເອື້ອອຳນວຍການຈັດຕັ້ງກຸ່ມ | ເອື້ອອຳນວຍການຈັດຕັ້ງກຸ່ມ(ກຸ່ມຮຽນຮູ້, ກຸ່ມຜະລິດ,ກຸ່ມຕະຫຼາດ, ອື່ນໆ) ອີງຕາມຫົວຂໍ້ ແລະ ຄວາມຕ້ອງການທີ່ໄດ້ປະເມີນ |
| 6 | ຈັດຕັ້ງການຝຶກອົບຮົມ | ຈັດຕັ້ງປະຕິບັດກິດຈະກຳການສົ່ງເສີມ | ຈັດຕັ້ງປະຕິບັດການສົ່ງເສີມລວມທັງການຝຶກດ້ານເຕັກນິກ, ການເຊື່ອມໂຍງກັບຕະຫຼາດ, ການເຂົ້າເຖິງປັດໃຈນຳເຂົ້າການຜະລິດ, ການສ້າງຄວາມ ເຂັ້ມແຂງໃຫ້ແກ່ກຸ່ມແລະອື່ນໆ |
| 7 | ຕິດຕາມແລະຊຸກຍູ້ SHIFT | ຕິດຕາມແລະຊຸກຍູ້ SHIFT | ຕິມຕາມແລະປະເມີນກິດຈະກຳຈັດຕັ້ງປະຕິບັດແບບມີສ່ວນຮ່ວມ |
| 8 | ຈັດຕັ້ງການແລກປ່ຽນລະຫ່ວາງຊາວກະສິກອນ (FEF), ສ້າງວິຊາການບ້ານ (EVES), ຂະຫຍາຍຜົນ(VES GO) | ຈັດຕັ້ງການແລກປ່ຽນລະຫ່ວາງຊາວກະສິກອນ (FEF), ສ້າງວິຊາການບ້ານ(EVES), ຂະຫຍາຍຜົນ(VES GO) | ການແລກປ່ຽນລະຫ່ວາງຊາວກະສິກອນ ແລະ ສ້າງລະບົບສົ່ງເສີມຂັ້ນບ້ານ(ກຸ່ມຊາວກະສິກອນ) |

ບັນດາຂະບວນການຈັດຕັ້ງປະຕິບັດທີ່ກ່າວມາຂ້າງເທິງນີ້ແມ່ນໄດ້ລະບຸຢ່າງລະອຽດໃນເຄື່ອງມືຮູບແບບພື້ນຖານການສົ່ງເສີມຂອງລາວ ແລະ ເຄື່ອງມືທີ່ສ້າງຂຶ້ນສໍາລັບການວິເຄາະສະຖານະພາບບ້ານ, ກອງປະຊຸມກຸ່ມບ້ານ ແລະ ການວິເຄາະຕະຫຼາດແບບເລັ່ງລັດ. ເຄື່ອງມືນີ້ສັງລວມເອົາ 3 ຂັ້ນຕອນທີ່ໄດ້ດັດມາຈາກເຄື່ອງມືສົ່ງເສີມພື້ນຖານ:

- ການວິເຄາະອຸປະສັກ ແລະ ໂອກາດ
- ການປະເມີນຄວາມຕ້ອງການ
- ການເອື້ອອໍານວຍການຈັດຕັ້ງກຸ່ມ / ການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມທີ່ມີຢູ່ແລ້ວ




## ຂ. ເປົ້າໝາຍຜູ້ເຂົ້າຮ່ວມ

LEA+ ສາມາດໃຊ້ໃນບ້ານເປົ້າໝາຍບ່ອນທີ່ບໍ່ທັນໄດ້ຈັດຕັ້ງກຸ່ມ ຫຼື ບ່ອນທີ່ມີກຸ່ມຢູ່ແລ້ວ. ເປົ້າໝາຍຜູ້ເຂົ້າຮ່ວມມີດັ່ງລຸ່ມນີ້:

| | **ບໍ່ທັນມີກຸ່ມ** | **ມີກຸ່ມແລ້ວ** |
|---|---|---|
| **ເປົ້າໝາຍ ຜູ້ເຂົ້າຮ່ວມ** | ຊາວກະສິກອນທຸກຄົນໃນຊຸມຊົນທີ່ສົນໃຈເຂົ້າຮ່ວມກິດຈະກໍາການສົ່ງເສີມ. | ສະມາຊິກກຸ່ມ ແລະ ຊາວກະສິກອນທຸກຄົນໃນຊຸມຊົນທີ່ສົນໃຈໃນການເປັນສະມາຊິກກຸ່ມ ຫຼື ເຂົ້າຮ່ວມກິດຈະກໍາການສົ່ງເສີມໃນບ້ານ. |

# 1. ການວິເຄາະອຸປະສັກ ແລະ ໂອກາດ

## 1.1 ຂໍ້ແນະນໍາ

ການວິເຄາະອຸປະສັກ ແລະ ໂອກາດ ແມ່ນສ້າງຂຶ້ນເພື່ອກໍານົດບັນດາອຸປະສັກທີ່ຊຸມຊົນກໍາລັງປະເຊີນໜ້າກັບບັນຫາສະເພາະຂອງເຂົາເຈົ້າ ແລະ ຍັງເປັນການກໍານົດໂອກາດຂອງຫົວຂໍ້ນັ້ນ. ການສ້າງແມ່ນອີງໃສ່ພື້ນຖານຫຼັກການຂອງການສົ່ງເສີມທີ່ບໍ່ພຽງແຕ່ແນໃສ່ເພື່ອແກ້ໄຂບັນຫາແຕ່ຍັງສົ່ງເສີມໂອກາດທີ່ມີທ່າແຮງຂອງຊາວກະສິກອນນໍາອີກ.

## 1.2 ຂັ້ນຕອນການຈັດຕັ້ງປະຕິບັດໃນບ້ານເປົ້າໝາຍ

| | ກິດຈະກໍາ | ເວລາ | ໝາຍເຫດ |
|---|---|---|---|
| 1 | ການແນະນໍາຕົວ | 5 ນາທີ | |
| 2 | ອະທິບາຍຈຸດປະສົງປະຊຸມ | 15 ນາທີ | |
| 3 | ອະທິບາຍຜົນໄດ້ຮັບຂອງກອງປະຊຸມກຸ່ມບ້ານ. ເອື້ອອໍານວຍການສົນທະນາຫົວຂໍ້ທີ່ຊາວກະສິກອນຢາກທີ່ຈະເລືອກຈາກລາຍການຫົວຂໍ້ບູລິມະສິດເຊິ່ງແມ່ນຜົນຂອງການວິເຄາະສະຖານະພາບບ້ານ ແລະ ກອງປະຊຸມກຸ່ມບ້ານ. | 30 ນາທີ | ໃຊ້ແຜ່ນເຈ້ຍທີ່ສັງລວມກິດຈະກໍາ ທີ່ເປັນທ່າແຮງທີ່ສະເໜີໃນ ກອງປະຊຸມກຸ່ມບ້ານ. ກິດຈະກໍາທີ່ຄັດເລືອກຄວນ ຈະອີງໃສ່ອຸປະສັກທີ່ຊຸມຊົນກໍາລັງປະເຊີນໜ້າຢູ່ ແລະ ບັນດາໂອກາດທີ່ເປັນທ່າແຮງທີ່ຢາກພັດທະນາ. ບໍ່ຈໍາເປັນທີ່ຈະເຮັດບາດກ້າວນີ້ ຖ້າແມ່ນກຸ່ມທີ່ມີຫົວຂໍ້(ກິດຈະກໍາ)ສົ່ງເສີມຢູ່ແລ້ວ |
| 4 | ຈັດຕັ້ງກຸ່ມຜະລິດສໍາລັບຫົວຂໍ້ທີ່ໄດ້ຄັດເລືອກ. (ການເລືອກສະມາຊິກອາດຈະໃຊ້ວິທີຍົກມື ຫຼື ບ່ອນບັດ). ອາດຈະຈັດຕັ້ງກຸ່ມສະເພາະແມ່ຍິງຖ້າຜູ້ຍິງທຸກຄົນສົນໃຈຫົວຂໍ້ດຽວກັນ. ແຍກເປັນກຸ່ມເພື່ອສົນທະນາກ່ຽວກັບ ອຸປະສັກ ແລະ ໂອກາດກຸ່ມໜຶ່ງຕໍ່ຫົວຂໍ້ໜຶ່ງ. ການສົນທະນາຄວນຈະສຸມໃສ່ບັນຫາຫຼາຍດ້ານຂອງການຜະລິດ. ຕົວຢ່າງ:ການຕະຫາດ, ການເຂົ້າເຖິງປັດໃຈນໍາເຂົ້າ, ການເຮັດວຽກຮ່ວມກັນເປັນກຸ່ມ, ອື່ນໆ | 40 ນາທີ | ພະນັກງານສົ່ງເສີມຄວນຈະເອື້ອອໍານວຍແຕ່ລະກຸ່ມໃນການສົນທະນາ ແລະຊ່ວຍໃນການສັງລວມບັນຫາທີ່ ຊາວກະສິກອນໄດ້ສະເໜີໃສ່ເຈ້ຍ ແຜ່ນໃຫ່ຍ. |
| 5 | ຕາງໜ້າຜູ້ເຂົ້າຮ່ວມຈາກກຸ່ມ ສະເໜີຜົນໄດ້ຮັບຈາກການສົນທະນາ(ການວິເຄາະ | 10 ນາທີ | |

| | ກິດຈະກຳ | ເວລາ | ໝາຍເຫດ |
|---|---|---|---|
| | ອຸປະສັກແລະໂອກາດ)ໃຫ້ແກ່ສະມາຊິກກຸ່ມ | | |
| 6 | ສະມາຊິກກຸ່ມແຕ່ລະຄົນສາມາດກຳນົດ ອຸປະສັກແລະໂອກາດເພື່ອເປັນບູລິມະສິດ ຂອງເຂົາເຈົ້າ | 20 ນາທີ | ການຈັດລຽງບູລິມະສິດສາມາດໝາຍກິດຈະກຳ ສຳລັບແມ່ຍິງ ແລະ ຜູ້ຊາຍດ້ວຍສີ ຕ່າງກັນ ຈາກການຍົກມື ຫຼື ວິທີອື່ນໆ |
| 7 | ຕາງໜ້າຜູ້ເຂົ້າຮ່ວມຈາກກຸ່ມ ສະເໜີອຸປະສັກ ແລະໂອກາດທີ່ໄດ້ກຳນົດບູລິມະສິດ | 10 ນາທີ | |



*ການຄັດເລືອກຫົວຂໍ້ສົ່ງເສີມໃນລາຍການກິດຈະກຳທີ່ມີທ່າແຮງຈາກຜົນຂອງກອງປະຊຸມກຸ່ມບ້ານ*



*ການຄັດເລືອກກິດຈະກຳ/ຫົວຂໍ້ ເພື່ອສົ່ງເສີມ*

*1.3 ແບບຟອມສຳລັບການວິເຄາະອຸປະສັກ ແລະ ໂອກາດ*

ວັນທີ ເດືອນ ປີ___/____/_____

ບ້ານ:________ ເມືອງ:____________ ແຂວງ:___________

ຫົວຂໍ້ຄັດເລືອກ:___________

ຈຳນວນຜູ້ເຂົ້າຮ່ວມ:___________ຄົນ, ຍິງ:__________ຄົນ

| **ອຸປະສັກ** | **ໂອກາດ** |
|---|---|
| ການຜະລິດ | ການຜະລິດ |
| ການຕະຫຼາດ | ການຕະຫຼາດ |
| ການຈັດຕັ້ງກຸ່ມ | ການຈັດຕັ້ງກຸ່ມ |
| ການເຂົ້າເຖິງການເງິນເພື່ອການຜະລິດ | ການເຂົ້າເຖິງການເງິນເພື່ອການຜະລິດ |
| ອື່ນໆ | ອື່ນໆ |

ຈັດລຽງບູລິມະສິດດ້ວຍການໃສ່ຕົວເລກທີ່ໄດ້ກຳນົດຕາມລຳດັບ

ເອື້ອອຳນວຍໂດຍ:________________________

*ຕົວຢ່າງ: ການວິເຄາະອຸປະສັກ ແລະ ໂອກາດ*

ວັນທີ ເດືອນ ປີ__17_/_03__/_2011_
ບ້ານ:__ປາກນ້ຳຕອງ_ ເມືອງ:__ນາໝໍ້______ ແຂວງ:__ອຸດົມໄຊ___
ຫົວຂໍ້ຄັດເລືອກ:___ໝູ_______
ຈຳນວນຜູ້ເຂົ້າຮ່ວມ:__8______ຄົນ, ຍິງ:____8___ຄົນ

| ອຸປະສັກ | ໂອກາດ |
|---|---|
| **ການຜະລິດ**<br>• ການຕອບຢາປ້ອງກັນພະຍາດບໍ່ທັນກັບເວລາ ພາໃຫ້ໝູຕາຍເປັນຈຳນວນຫຼວງຫຼາຍ-1<br>• ຂາດອຸປະກອນສັກຢາ ແລະ ຢາປ້ອງກັນ ລາຄາແພງ<br>• ຂາດເຄື່ອງບົດ ແລະ ປຸງແຕ່ງອາຫານ<br>• ຂາດແນວພັນ ແລະ ເຕັກນິກການປູກຫຍ້າ ລ້ຽງສັດ-2 | **ການຜະລິດ**<br>• ມີສັດຕະວາແພດປະຈຳບ້ານແລະ ສະມາຊິກກຸ່ມ ສາມາດສັກຢາດ້ວຍຕົນເອງ-1<br>• ຫ້ອງການກະສິກຳເມືອງມີຂໍ້ມູນໃນການເຂົ້າເຖິງ ຢາປ້ອງກັນພະຍາດສັດ ແລະ ບາງຄັ້ງຍັງມີໄວ້ຈຳໜ່າຍ ໃນຫ້ອງການ |
| **ການຕະຫຼາດ**<br>• ລາຄາການຂາຍສັດຍັງຂຶ້ນກັບຜູ້ເກັບຊື້ | **ການຕະຫຼາດ**<br>• ມີຕະຫຼາດຊີ້ນໝູພາຍໃນບ້ານ ແລະ ໃນເມືອງໃກ້ຄຽງ<br>• ພໍ່ຄ້າມາຊື້ໝູຮອດບ້ານ |
| **ການຈັດຕັ້ງກຸ່ມ**<br>• ຍັງບໍ່ທັນມີການຄຸ້ມຄອງກຸ່ມທີ່ເຂັ້ມແຂງ<br>• ກຸ່ມຍັງບໍ່ມີແຜນການຜະລິດ<br>• ການກຳນົດພາລະບົດບາດ ແລະ ໂຄງຮ່າງ ການຈັດຕັ້ງກຸ່ມຍັງບໍ່ຈະແຈ້ງ | **ການຈັດຕັ້ງກຸ່ມ**<br>• ມີການປຶກສາຫາລື, ແລກປ່ຽນບົດຮຽນ ແລະ ສັກຢາຊ່ວຍກັນພາຍໃນກຸ່ມ-3<br>• ມີລະບຽບທີ່ໄດ້ຕົກລົງເປັນຈາກສະມາຊິກທຸກຄົນ<br>• ມີການນຳໃຊ້ຕູ້ເຢັນຮ່ວມກັນເພື່ອເກັບມຽນຢາວັກຊິນ |
| **ການເຂົ້າເຖິງການເງິນເພື່ອການຜະລິດ**<br>• ການເຂົ້າເຖິງແຫຼ່ງທຶນການຜະລິດຍັງຈຳກັດ-3<br>• ການເຂົ້າເຖິງແຫຼ່ງທຶນການຜະລິດມີຫຼາຍ ຂັ້ນຕອນ ແລະ ໃຊ້ເວລາດົນ | **ການເຂົ້າເຖິງການເງິນເພື່ອການຜະລິດ**<br>• ທະນາຄານນະໂຍບາຍໃຫ້ການບໍລິການທຶນການ ຜະລິດແກ່ສະມາຊິກກຸ່ມໃນບ້ານ-2 |
| **ອື່ນໆ** | **ອື່ນໆ** |

ຈັດລຽງບູລິມະສິດດ້ວຍການໃສ່ຕົວເລກທີ່ໄດ້ກຳນົດຕາມລຳດັບ
ເອື້ອອຳນວຍໂດຍ:______________________
ຕຳແໜ່ງ:________________________

# 2. ການປະເມີນຄວາມຕ້ອງການ

## 2.1 ຂໍ້ແນະນຳ

ການປະເມີນຄວາມຕ້ອງການແມ່ນຂະບວນການກຳນົດຄວາມຕ້ອງການສະເພາະຂອງກິດຈະກຳ/ຫົວຂໍ້ທີ່ຈະສົ່ງເສີມໃນບ້ານໃດໜຶ່ງໂດຍອີງໃສ່ອຸປະສັກ ແລະ ໂອກາດທີ່ໄດ້ວິເຄາະ. ຄວາມຕ້ອງການອາດຈະເປັນການແກ້ໄຂບັນຫາສຳລັບອຸປະສັກ ທີ່ໄດ້ ວິເຄາະ ຫຼື ໂອກາດທີ່ມີທ່າແຮງໃນການພັດທະນາ. ການປະເມີນຄວາມຕ້ອງການຄວນເຮັດຫຼັງຈາກການວິເຄາະອຸປະສັກ ແລະ ໂອກາດໃນກອງປະຊຸມດຽວກັນ ແລະ ຜູ້ເຂົ້າຮ່ວມກອງປະຊຸມຊຸດດຽວກັນ.

## 2.2 ຂັ້ນຕອນຈັດຕັ້ງປະຕິບັດໃນບ້ານເປົ້າໝາຍ

| | ກິດຈະກຳ | ເວລາປະມານ | ໝາຍເຫດ |
|---|---|---|---|
| 1 | ຕິດເຈ້ຍສະຫຼຸບຜົນຂອງການວິເຄາະ ອຸປະສັກ ແລະ ໂອກາດໃສ່ບ່ອນທີ່ ຜູ້ເຂົ້າຮ່ວມທຸກຄົນສາມາດເຫັນ | 10 ນາທີ | |
| 2 | ເອື້ອອຳນວຍການການສົນທະນາ ຄວາມຕ້ອງການໂດຍອີງໃສ່ອຸປະສັກ ແລະ ໂອກາດທີ່ກຸ່ມໄດ້ວິເຄາະ. ການ ສົນທະນາຄວນຈະສຸມໃສ່ວິທີແກ້ໄຂ ບັນຫາ,ໂອກາດທີ່ມີທ່າແຮງ ແລະ ກຸ່ມຫຍັງທີ່ຊາວກະສິກອນຢາກສ້າງ. | 45 ນາທີ | ບົດບາດຂອງຜູ້ເອື້ອອຳນວຍແມ່ນ ຮັກສາການສົນທະນາໃຫ້ໃນກອບຫົວຂໍ້ ທີ່ກຳນົດມາຈາກການວິເຄາະອຸປະສັກ ແລະ ໂອກາດ. ຜູ້ເອື້ອອຳນວຍສາມາດຊ່ວຍ ສັງລວມເອົາໃຈຄວາມສົນທະນາເຂົ້າໃສ່ເຈ້ຍ ແຜ່ນໃຫ່ຍ |
| 3 | ຕ່າງໜ້າຜູ້ເຂົ້າຮ່ວມສະເໜີຜົນຂອງການ ສົນທະນາ(ການປະເມີນຄວາມຕ້ອງການ) ໃຫ້ແກ່ຜູ້ເຂົ້າຮ່ວມ ຄົນອື່ນໆ | 15 ນາທີ | |
| 4 | ຜູ້ເຂົ້າຮ່ວມສາມາດກຳນົດບູລິມະສິດ ຄວາມຕ້ອງການເພື່ອເປັນບູລິມາສິດ ໃນການສົ່ງເສີມໃຫ້ແກ່ກຸ່ມຕົນເອງ | 20 ນາທີ | ການກຳນົດບູລິມະສິດສາມາດໝາຍດ້ວຍສີທີ່ ຕ່າງກັນສຳລັບ ແມ່ຍິງ, ຊົນເຜົ່າ, ອື່ນໆ ຈາກການຍົກມື |
| 5 | ຕາງໜ້າຜູ້ເຂົ້າຮ່ວມສະເໜີ ຄວາມຕ້ອງການບູລິມະສິດ ຕາມລຳດັບ | 10 ນາທີ | |
| 6 | ຖາມຜູ້ເຂົ້າຮ່ວມວ່າມີຄວາມສົນໃຈ ທີ່ຢາກຈະຈັດຕັ້ງກຸ່ມຕາມຫົວຂໍ້ທີ່ອອກມາ ຈາກການເຮັດວຽກຮ່ວມກັນແທ້ຫຼືບໍ. | 20 ນາທີ | ຜູ້ເຂົ້າຮ່ວມທີ່ຢາກຈະເຂົ້າຮ່ວມກຸ່ມຄວນຈະ ເປັນຜູ້ສົນໃຈ. ວາງແຜນການສົນທະນາແບບ ມີສ່ວນຮ່ວມກັບຜູ້ທີ່ຢາກຈະເຂົ້າຮ່ວມກຸ່ມໂດຍແຍກອອກເປັນກຸ່ມຕ່າງຫາກ (ສາມາດເຮັດໃນມື້ດຽວກັນ ຫຼື ອາທິດດຽວກັນ ຫຼັງຈາກການສົນທະນາກັບຊຸມຊົນເພື່ອໃຫ້ເຂົາເຈົ້າມີເວລາໃນການຕັດສິນໃຈ ແລະ ສາມາດ ຕົກລົງເອົາສະມາຊິກຜູ້ທີ່ສົນໃຈເຂົ້າໃນກຸ່ມ) |

2.3 ແບບຟອມສຳລັບລາຍງານການປະເມີນຄວາມຕ້ອງການ

ວັນທີ ເດືອນ ປີ___/____/_____

ບ້ານ:________ ເມືອງ:____________ ແຂວງ:___________

ຫົວຂໍ້ຄັດເລືອກ:___________

| ປະເພດກຸ່ມທີ່ຕ້ອງການຈັດຕັ້ງ | ຕົວຊີ້ວັດຜົນໄດ້ຮັບ | ຈັດລະດັບ |
|---|---|---|
| ເຕັກນິກການຜະລິດ | | |
| ການຕະຫຼາດ | | |
| ເຮັດວຽກຮ່ວມກັນເປັນກຸ່ມ | | |
| ກຸ່ມເພື່ອເຂົ້າເຖິງປັດໃຈນຳເຂົ້າ | | |
| ອື່ນໆ | | |

ເອື້ອອຳນວຍໂດຍ:________________________

ຕຳແໜ່ງ:_________________________

*ຕົວຢ່າງ: ການຈັດກອງປະຊຸມເອື້ອອໍານວຍການຈັດຕັ້ງກຸ່ມ*

ວັນທີ ເດືອນ ປີ: *17 /06/2011* ບ້ານ: ***ປາກນໍ້າຕອງ*** ເມືອງ: ***ນາໝໍ້*** ແຂວງ: ***ອຸດົມໄຊ***

ຫົວຂໍ້ຄັດເລືອກ: ***ການລ້ຽງໝູ***

| ປະເພດກຸ່ມທີ່ຕ້ອງການຈັດຕັ້ງ | ຕົວຊີ້ວັດຜົນໄດ້ຮັບ | ຈັດລະດັບ |
|---|---|---|
| ກຸ່ມເຕັກນິກການຜະລິດ.<br>• *ປັບປຸງຄວາມຮູ້ກ່ຽວກັບການສັກຢາປ້ອງກັນ ແລະ ປິ່ນປົວ*<br>• *ປັບປຸງການປູງແຕ່ງອາຫານແບບພື້ນເມືອງ* | *ຈໍານວນໝູຂອງສະມາຊິກກຸ່ມເພີ້ມຂື້ນຢ່າງໜ້ອຍ 50 % (ອີງຕາມຈໍານວນພໍ່ແມ່ພັນ)ແລະສາມາດສ້າງລາຍຮັບໂດຍການຂາຍໝູ.* | • *1*<br>• |
| ການຕະຫຼາດ.<br>• *ປັບປຸງຂໍ້ມູນຮ່ວມກັບແມ່ຄ້າກ່ຽວກັບວັນເວລາທີ່ສະມາຊິກຕ້ອງການຂາຍໝູ* | *ເພື່ອເພີ່ມປະລມານການຂາຍໝູ* | • *3* |
| ເຮັດວຽກຮ່ວມກັນເປັນກຸ່ມ.<br>• *ສ້າງແຜນການຜະລິດ ແລະ ແຜນກິດຈະກໍາຮ່ວມກັນໃຫ້ແກ່ກຸ່ມ*<br>• *ປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບພ້ອມທັງສ້າຄວາມເຂົ້າໃຈໃຫ້ແກ່ສະມາຊິກກຸ່ມ* | *ແຜນການຂອງກຸ່ມໄດ້ຖືກສ້າງຂື້ນພ້ອມທັງປະກອບມີພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຢ່າງຈະແຈ້ງ* | • *4*<br>• |
| ກຸ່ມເພື່ອເຂົ້າເຖິງປັດໃຈນໍາເຂົ້າ/ສິນເຊື່ອ.<br>• *ສະໜອງວັກຊີນໃຫ້ແກ່ກຸ່ມເປັນປົກກະຕິ*<br>• *ກຸ່ມຄຸ້ມຄອງ ແລະ ນໍາໃຊ້ອຸປະກອນສັກຢາພາຍໃນກຸ່ມ*<br>• *ສ້າງກອງທຶນພາຍໃນກຸ່ມເພື່ອຊື້ຢາວັກຊິ່ນ*<br>• *ນໍາໃຊ້ນະໂຍບາຍຂອງທະນາຄານນະໂຍບາຍ 5 ລ້ານກີບເພື່ອລົງທຶນໃນການຜະລິດ* | ກຸ່ມມີຢາປ້ອງກັນສັກທັນກັບເວລາ ແລະ ສາມາດຫຼຸດຜ່ອນອັດຕາການຕາຍຂອງໝູ<br><br>*ສະມາຊິກກຸ່ມສາມາດເຂົ້າເຖິງກອງທຶນເພື່ອຊື້ແນວພັນໝູ* | • *2*<br>•<br>•<br>• |
| ອື່ນໆ | | |

ເອື້ອອໍາວຍໂດຍ:______________________

ຕໍາແໜ່ງ:________________________



*ການເອື້ອອຳນວຍການວິເຄາະອຸປະສັກ ແລະ ໂອກາດ*



*ການເອື້ອອຳນວຍການປະເມີນຄວາມຕ້ອງການ*

# 3. ການເອື້ອອຳນວຍໃນການຈັດຕັ້ງກຸ່ມ

### 3.1 ຂໍ້ແນະນຳ

ເຄື່ອງມືນີ້ສ້າງຂຶ້ນເພື່ອຊ່ວຍໃນການລິເລີ່ມການສົນທະນາ ແລະ ການເອື້ອອຳນວຍໃນການຈັດຕັ້ງກຸ່ມໃຫ້ແກ່ຊາວກະສິກອນ. ເຄື່ອງມືປະກອບດ້ວຍຊຸດຄຳຖາມເພື່ອສະດວກໃນການເອື້ອອຳນວຍການສົນທະນາກັບສະມາຊິກ ແລະ ຈັດຕັ້ງກຸ່ມເຊິ່ງປະກອບມີເປົ້າໝາຍ ແລະ ການຈັດຕັ້ງທີ່ຊັດເຈນ ເຊິ່ງໄດ້ຕົກລົງເຫັນດີຈາກສະມາຊິກ.

ບົດບາດຂອງຜູ້ເອື້ອອຳນວຍການຈັດຕັ້ງກຸ່ມແມ່ນເພື່ອສັງລວມເອົາຄວາມຄິດເຫັນຈາກຜູ້ເຂົ້າຮ່ວມ. ຜູ້ເອື້ອອຳນວຍຈະຕ້ອງໄດ້ໃຫ້ທິດເພື່ອຊ່ວຍໃຫ້ຊຸມຊົນໄດ້ສົນທະນາກ່ຽວກັບສະພາບຂອງຕົນເອງ, ກຳນົດການແກ້ໃຂບັນຫາ ແລະ ລິເລີ່ມການສົ່ງເສີມໂອກາດທີ່ມີທ່າແຮງໃນການພັດທະນາທີ່ຈະເອົາກຳນົດເພື່ອວາງແຜນແກ້ໃຂບັນຫາ. ໜ້າທີ່ຮັບຜິດຊອບຂອງຜູ້ເອື້ອອຳນວຍຍັງຈະຕ້ອງແນ່ໃຈວ່າການສື່ສານຕ້ອງໃຫ້ທົ່ວເຖິງຜູ້ເຂົ້າຮ່ວມທຸກຄົນ ແລະ ແນ່ໃຈວ່າຜູ້ເຂົ້າຮ່ວມມີຄວາມພໍໃຈກັບການຕັດສິນໃຈ.

### 3.2 ການຈັດຕັ້ງປະຕິບັດໃນບ້ານເປົ້າໝາຍ

ມີສອງຮູບແບບການເອື້ອອຳນວຍທີ່ແຕກຕ່າງກັນໃນການຈັດຕັ້ງກຸ່ມມັນຂຶ້ນກັບວ່າການເອື້ອອຳນວຍນັ້ນສຳລັບການຈັດຕັ້ງກຸ່ມໃໝ່ ຫຼື ໃຫ້ກັບກຸ່ມທີ່ມີຢູ່ແລ້ວ.

| | ກິດຈະກຳ | ເວລາ | ໝາຍເຫດ |
|---|---|---|---|
| 1 | ການແນະນຳຕົວ | 5 ນາທີ | |
| 2 | ສະເໜີຈຸດປະສົງຂອງການປະຊຸມ | 10 ນາທີ | |
| 3 | ເອື້ອອຳນວຍການສົນທະນາ ກ່ຽວກັບຄວາມທ້າທາຍ ແລະ ຜົນປະໂຫຍດທີ່ຈະໄດ້ຮັບໃນການ ເຮັດວຽກເປັນກຸ່ມ (ເອກະສານຊ້ອນທ້າຍ 2) | 20 ນາທີ | ຜູ້ເອື້ອອຳນວຍຈະໄດ້ຖາມຜູ້ເຂົ້າຮ່ວມວ່າແມ່ນຫຍັງ ທີ່ເຂົາເຈົ້າຄິດວ່າເປັນສິ່ງທ້າທາຍ ແລະ ຜົນປະ ໂຫຍດ ແລະ ຊ່ວຍໃຫ້ສັງລວມໃຈຄວາມສຳຄັນລົງ ໃນ ເຈັຍແຜ່ນໃຫຍ່.ຖ້າເປັນກຸ່ມທີ່ມີຢູ່ແລ້ວສາມາດ ສັງລວມເອົາປະສົບການໃນການຈັດຕັ້ງປະຕິບັດ ຜ່ານມາວ່າມີບັນຫາຫຍັງ ແລະ ບົດຮຽນທີ່ ຖອດຖອນ ໄດ້ຈາກການເຮັດວຽກເປັນກຸ່ມ |
| 4 | ເອື້ອອຳນວຍການສົນທະນາກ່ຽວກັບ ຄຸນລັກສະນະຂອງກຸ່ມທີ່ມີຄວາມ ສຳເລັດ( ເອກະສານຊ້ອນທ້າຍ 3) | 30 ນາທີ | ສົນທະນາກັບຜູ້ເຂົ້າຮ່ວມກ່ຽວກັບວິທີການຈັດຕັ້ງກຸ່ມ ທີ່ມີຜົນສຳເລັດໂດຍອີງໃສ່ບັນດາອົງປະກອບ ທີ່ກ່າວມາຂ້າງເທິງ. |
| 5 | ເອື້ອອຳນວຍການສົນທະນາ ກ່ຽວກັບການກຳນົດຈຸດປະສົງ ຂອງກຸ່ມ | 30 ນາທີ | ຈຸດປະສົງຂອງກຸ່ມຕ້ອງຈະແຈ້ງ ແລະ ເຫັນດີຈາກ ສະມາຊິກທຸກຄົນ. ອີງໃສ່ຜົນຂອງການປະເມີນ ຄວາມຕ້ອງການໃນເຈັຍແຜ່ນໃຫຍ່ທີ່ກຳນົດຫົວຂໍ້/ ກິດຈະກຳທີ່ຜູ້ເຂົ້າຮ່ວມ ສົນໃຈຢາກໃຫ້ສົ່ງເສີມ. |
| 6 | ເອື້ອອຳນວຍການສົນທະນາ | 60 ນາທີ | ໂຄງຮ່າງການຈັດຕັ້ງຕ້ອງໄດ້ຮັບການເຫັນດີຈາກ |

| | | | |
|---|---|---|---|
| | ກ່ຽວກັບການສ້າງໂຄງຮ່າງ ການຈັດຕັ້ງຂອງກຸ່ມ ແລະ ຄັດເລືອກຄະນະຄຸ້ມຄອງກຸ່ມ | | ສະມາຊິກທຸກຄົນ ແລະ ຕ້ອງໄດ້ເລືອກເອົາຄະນະ ຄຸ້ມຄອງໂຄງການ. ສະມາຊິກສາມາດລົງຄະແນນ ສຽງຖ້າມີຜູ້ສະໝັກສອງຄົນຂຶ້ນໄປສໍາລັບຕໍາແໜ່ງ ໃດໜຶ່ງ. ເຄື່ອງມື ປະກອບດ້ວຍສອງຊຸດຄໍາຖາມ ຂຶ້ນກັບວ່າເປັນການຈັດຕັ້ງກຸ່ມໃໝ່ຫຼືວ່າເປັນການ ສ້າງຄວາມເຂັ້ມແຂງ ໃຫ້ແກ່ກຸ່ມເກົ່າ. ລະບຽບກຸ່ມ ສ້າງຂຶ້ນບົນພື້ນຖານ ການເຫັນດີ ຂອງສະມາຊິກ ທຸກຄົນ. ລະບຽບກຸ່ມ ຕ້ອງສ້າງຂຶ້ນ ແລະ ປ່ຽນໂດຍ ສະມາຊິກກຸ່ມ. ການກໍານົດລະບຽບກຸ່ມບໍ່ຈໍາເປັນ ລຽງລໍາດັບຄວາມ ສໍາຄັນເອົາຂໍ້ໃດຂຶ້ນກ່ອນກໍ່ໄດ້ຂຶ້ນກັບການເຫັນດີ ຂອງສະມາຊິກ. |
| 7 | ເອື້ອອໍານວຍການສົນທະນາກັບ ກຸ່ມກ່ຽວກັບການສ້າງແຜນ ກິດຈະກໍາ, ກໍານົດໜ້າທີ່ຮັບຜິດຊອບ ແລະ ເວລາຈັດຕັ້ງປະຕິບັດໃຫ້ແກ່ກຸ່ມ | 30 ນາທີ | |
| 8 | ສະມາຊິກຂອງກຸ່ມສະເໜີຈຸດປະສົງ, ລະບຽບ ແລະ ແຜນຂອງກຸ່ມ | 20 ນາທີ | |
| 9 | ກໍານົດວັນເວລາສໍາລັບການປະຊຸມ ຄັ້ງຕໍ່ໄປ ຫຼື ຈັດຕັ້ງປະຕິບັດກິດຈະກໍາ ດັ່ງທີ່ໄດ້ກໍານົດໃນແຜນສິ່ງເສີມ. | 15 ນາທີ | |

## 3.3 ຄໍາຖາມຊ່ວຍການເອື້ອອໍານວຍການຈັດຕັ້ງກຸ່ມ[1]

**ການຈັດຕັ້ງກຸ່ມໃໝ່**

- ກິດຈະກໍາຫຍັງແດ່ທີ່ຈະໄດ້ຈັດຕັ້ງປະຕິບັດພາຍໃນກຸ່ມເພື່ອບັນລຸເປົ້າໝາຍທີ່ຕັ້ງໄວ້?
- ຈໍາເປັນທີ່ຈະແບ່ງອອກເປັນຫຼາຍພາກສ່ວນເພື່ອເຮັດວຽກໃຫ້ບັນລຸເປົ້າໝາຍບໍ? ຈໍາເປັນຕ້ອງຄັດເລືອກ/ມອບໜ້າວຽກໃຫ້ແຕ່ລະຄົນບໍ?
- ຕ້ອງການໃຫ້ມີຕໍາແໜ່ງຫຍັງແດ່ ແລະ ໂຄງສ້າງຂອງຄະນະຄຸ້ມຄອງກຸ່ມເປັນແນວໃດ?
- ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນມີຫຍັງແດ່?
- ຕ້ອງມີມາດຖານຫຍັງແດ່ສໍາລັບຄົນທີ່ຈະຮັບຜິດຊອບແຕ່ລະໜ້າວຽກ?
- ໃຜເປັນຜູ້ເໝາະສົມໃນແຕ່ລະຕໍາແໜ່ງ ແລະ ຄວນຮັບຜິດຊອບໜ້າວຽກດັ່ງກ່າວດົນປານໃດ?
- ລະບຽບທົ່ວໄປສໍາລັບກຸ່ມມີຫຍັງແດ່?
- ຈະມີການປະຕິບັດລະບຽບຕໍ່ຄະນະກຸ່ມ ແລະ ສະມາຊິກຜູ້ທີ່ເຮັດບໍ່ສໍາເລັດໜ້າທີ່ແນວໃດ?
- ຂໍ້ມູນໃດແດ່ທີ່ຄວນຈະໄດ້ບັນທຶກ? ໃຜເປັນຜູ້ບັນທຶກ?[1]

[1] *ເອກະສານຄັດຕິດ 3 - ການສົນທະນາເພື່ອເອື້ອອໍານວຍການຈັດຕັ້ງກຸ່ມ*

**ການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມເກົ່າ**

- ຈຸດປະສົງຂອງກຸ່ມມີຫຍັງແດ່? ຄວນຈະກຳນົດຈຸດປະສົງຄືນບໍ ?
- ໂຄງຮ່າງການຈັດຕັ້ງແບ່ງອອກເປັນຈັກພາກສ່ວນ ແລະ ໃຜຮັບຜິດຊອບແຕ່ລະໜ້າວຽກ? ຈຳເປັນທີ່ຈະປັບປຸງໂຄງຮ່າງການຈັດຕັ້ງ ແລະ ຜູ້ຮັບຜິດຊອບແຕ່ລະໜ້າວຽກອີກບໍ?
- ພາລະບົດບາດລວມຂອງສະມາຊິກມີຫຍັງແດ່? ທຸກຄົນເຂົ້າໃຈລະບຽບ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບບໍ? ຈຳເປັນຕ້ອງໄດ້ປັບປຸງຄືນບໍ?
- ກຸ່ມຢາກຈະຂະຫຍາຍສະມາຊິກໃໝ່ອີກບໍ? ມີໃຜອີກແດ່ທີ່ສົນໃຈຢາກເປັນສະມາຊິກໃໝ່ຂອງກຸ່ມບໍ?
  ມີໃຜແດ່ຢາກອອກຈາກການເປັນສະມາຊິກກຸ່ມ?
  ກຸ່ມຢາກໃຫ້ໂອກາດແກ່ທຸກປະເພດແລະຊັ້ນຄົນເຂົ້າຮ່ວມກຸ່ມບໍ, ເຊັ່ນວ່າ: ແມ່ຍິງ, ຊົນເຜົ່າ, ອື່ນໆ?
- ເຮັດແນວໃດຜູ້ສົນໃຈຢາກເປັນສະມາຊິກໃໝ່ຈຶ່ງສາມາດເຂົ້າຮ່ວມກຸ່ມໄດ້?



*ເອື້ອອຳນວຍເພື່ອປັບປຸງກຸ່ມເກົ່າ ກຸ່ມລ້ຽງໝູ, ເມືອງ ນາໝໍ້, ແຂວງ ອຸດົມໄຊ*



*ແຜນຂອງກຸ່ມໝູ, ເມືອງ ນາໝໍ້, ແຂວງ ອຸດົມໄຊ*

## 3.4 ແບບຟອມການສ້າງແຜນສຳລັບກຸ່ມ

ວັນທີ ເດືອນ ປີ___/____/_____

ບ້ານ:________ ເມືອງ:____________ ແຂວງ:___________

ຈຸດປະສົງຂອງກຸ່ມ

ຈຳນວນສະມາຊິກກຸ່ມ __________ຍິງ:_________ຊົນເຜົ່າ:_____________

| ຊື່ຂອງຄະນະກຸ່ມ | ຊື່ຂອງສະມາຊິກກຸ່ມ |
|---|---|
| | |

ຊື່ຜູ້ຕິດຕໍ່:________________________ ເບີຕິດຕໍ່:____________________

**ຮ່າງແຜນຂອງກຸ່ມ**

| ລ/ດ | ໜ້າວຽກ | ເວລາຈັດຕັ້ງປະຕິບັດ | ຜູ້ຮັບຜິດຊອບ | ສະໜັບສະໜູນຈາກເມືອງ | ໝາຍເຫດ |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |

**ຕົວຢ່າງແຜນຂອງກຸ່ມ**

ວັນທີ ເດືອນ ປີ__17_/_06_/_2011_
ບ້ານ:_ປາກນ້ຳຕອງ_______ ເມືອງ:_ນາໝໍ້__ ແຂວງ:_ອຸດົມໄຊ__
ຈຸດປະສົງຂອງກຸ່ມ: *ເພື່ອສ້າງລາຍຮັບຈາກການຂາຍໝູ, ເພື່ອເຂົ້າຫາແຫຼ່ງທຶນການຜະລິດຈາກທະນາຄານນະໂຍບາຍໃນການລ້ຽງໝູ*

ຈຳນວນສະມາຊິກກຸ່ມ ____12_____ຍິງ:____12_____ຊົນເຜົ່າ:___8____
ຊື່ຜູ້ຕິດຕໍ່:___ນ. ອ່ອນສີ____ ເບີຕິດຕໍ່:__020 57892154__

| ຊື່ຂອງຄະນະກຸ່ມ | ຊື່ຂອງສະມາຊິກກຸ່ມ |
|---|---|
| | |

**ແຜນຂອງກຸ່ມ**

| **ລ/ດ** | **ໜ້າວຽກ/ກິດຈະກຳ** | **ເວລາຈັດຕັ້ງປະຕິບັດ** | **ຜູ້ຮັບຜິດຊອບ** | **ການສະໜັບສະໜູນຈາກເມືອງ** |
|---|---|---|---|---|
| 1 | ຊື້ ສະແລ່ງ ສັກຢາ | ເດືອນ 7, 2011 | ຫົວໜ້າກຸ່ມ | ພົວພັນກັບຂະແໜງ ລ້ຽງສັດ ເພື່ອສະໜອງສະແລ່ງ |
| 2 | ຈັດຊື້ຢາປ້ອງກັນ ແລະ ສັກໃຫ້ໝູເປັນປະຈຳ | ທ້າຍເດືອນ 7, 2011 | ຮອງຫົວໜ້າກຸ່ມ | ພົວພັນນຳກກປ ເມືອງເພື່ອຊື້ວັກຊີນ |
| 3 | ຊື້ແນວພັນຫຍ້າ ແລະ ຝຶກອົບຮົມວິທີປູກ | ເດືອນ 8-10, 2011 | ສະມາຊິກກຸ່ມ | ສະໜອງເມັດພັນ ແລະ ຝຶກອົບຮົມ ວິທີປູກ |
| 4 | ເອື້ອອຳນວຍ 4 ຄອບຄົວ ໃໝ່ທີ່ສົນໃຈໃຫ້ເຂົ້າເຖິງ ທະນາຄານນະໂຍບາຍ | ເດືອນ 9, 2011 | ຫົວໜ້າ ບັນຊີ ກຸ່ມ | ຊ່ວຍຂັ້ນຕອນເອກະສານ ແລະ ປະສານກັບ ທະນາຄານ |
| 5 | ສະເໜີທະນາຄານເພື່ອ ເລື່ອນຈ່າຍໜີ້ສຳລັບດອກ ເບ້ຍ 80% ຂອງໝູທີ່ຕາຍ | ເດືອນ 10, 2011 | ຫົວໜ້າ ບັນຊີ ກຸ່ມ | ເອກະສາຢັ້ງຢືນສະພາບໝູຕາຍເພື່ອເລື່ອນການ ຈ່າຍ |
| 6 | ປັບປຸງການຄຸ້ມຄອງແລະບໍລິຫານກຸ່ມ: ປັບປຸງໜ້າທີ່ ຮັບຜິດຊອບຂອງຫົວໜ້າກຸ່ມ/ສະມາຊິກ, ໂຄງຮ່າງການ ຈັດຕັ້ງ ແລະ ລະບຽບກຸ່ມ | ເດືອນ 9, 2011 | ສະມາຊິກກຸ່ມ | ເອື້ອອຳນວຍການຈັດ ປະຊຸມ |
| 7 | ຈ່າຍໜີ້ສຳລັບ 6 ເດືອນ ແລະ ວາງແຜນການເງິນສຳລັບກຸ່ມ | ເດືອນ 12 , 2011 | ສະມາຊິກກຸ່ມ | ເອື້ອອຳນວຍການຈັດ ປະຊຸມ |

*ເອກະສານຊ້ອນທ້າຍ 1*

## ຈຸດດີ ແລະ ຈຸດອ່ອນ ຂອງການເຮັດວຽກເປັນກຸ່ມ

| | ຈຸດດີ | ຈຸດອ່ອນ |
|---|---|---|
| ການເຮັດວຽກເປັນກຸ່ມ | • ມີການແບ່ງໜ້າວຽກເຮັດໃຫ້ວຽກເບົາລົງ<br>• ນຳໃຊ້ຄວາມຄິດ, ອຸປະກອນ ແລະ ເຄື່ອງມືຮ່ວມກັນ<br>• ມີອຳນາດໃນການ ຕໍ່ລອງ ແລະ ເຈລະຈາເພີ່ມຂຶ້ນ<br>• ສະມາຊິກສາມາດແລກປ່ຽນບົດຮຽນເຊິ່ງກັນແລະກັນ<br>• ປະຢັດທຶນຮອນແລະຄ່າໃຊ້ຈ່າຍ<br>• ສາມາດຕໍ່ລອງລາຄາຮ່ວມກັນໃນເວລາຊື້ສິ່ງນຳເຂົ້າການຜະລິດ<br>• ສາມາດຜະລິດ ແລະ ຮອງຮັບການສັ່ງຊື້ໃນປະລິມານຫຼາຍໄດ້ | • ໃຊ້ເວລາຫຼາຍໃນການຕັດສິນໃຈ ແລະ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງໝົດທຸກຄົນ<br>• ສະມາຊິກບາງຄົນອາດຈະເອົາປຽບຄົນອື່ນ<br>• ຍາກທີ່ຈະເຮັດວຽກຮ່ວມກັນຖ້າບໍ່ມີຄວາມເຊື່ອໝັ້ນແລະໄວ້ວາງໃຈກັນ ພາຍໃນທີມງານ |

*ເອກະສານຊ້ອນທ້າຍ 2*

## ຄຸນລັກຊະນະຂອງກຸ່ມຊາວກະສິກອນທີ່ປະສົບຜົນສຳເລັດຢູ່ໃນ ສປປ ລາວ

ບັນດາຊາວກະສິກອນຢູ່ໃນປະເທດລາວສາມາດສ້າງຕັ້ງກຸ່ມ,ມີການຮ່ວມມືເຊິ່ງກັນແລະກັນຈົນປະສົບຜົນສຳເລັດເປັນເວລາດົນນານມາແລ້ວ. ກຸ່ມດັ່ງກ່າວມີຄຸນລັກຊະນະພິເສດທີ່ຄ້າຍຄືກັນຫຼາຍຢ່າງເຊັ່ນ:

- ພວກເຂົາມີຄວາມຕື່ນຕົວໃນການສ້າງຕັ້ງກຸ່ມ (ຕົວຢ່າງ: ກຳນົດຈຸດປະສົງດ້ວຍຕົນເອງ);
- ມີການກຳນົດຈຸດປະສົງ ແລະ ເປົ້າໝາຍທີ່ສັດເຈນ;
- ມີການນຳເຂັ້ມແຂງ ແລະ ມີຄວາມຮັບຜິດຊອບ: ມີວິໄສທັດທີ່ສັດເຈນ, ມອງການໄກ, ທັນທິດການພັດທະນາເລັງໃສ່ຊຸມຊົນ, ເປັນປະຊາທິປະໄຕ, ສາມາດຜ່ອນສັ້ນຜ່ອນຍາວ ແລະ ເຕົ້າໂຮມເອົາທຸກພາກສ່ວນຂອງຊຸມຊົນເຂົ້າມາຮ່ວມໃນກິດຈະກຳແຕ່ຕົ້ນຈົນຈົບ;
- ມີການຕັດສິນໃຈແບບໂປ່ງໃສ;
- ກຸ່ມມີນຳໜຶ່ງໃຈດຽວກັນ (ການຕັດສິນຂອງສະມາຊິກພາຍໃນກຸ່ມເປັນປະຊາມະຕິ);
- ກຸ່ມໄດ້ມີການຈັດວາງລະບຽບການທີ່ຮັດກຸ່ມ (ລະບຽບການທີ່ສັດເຈນ ແລະ ມີຜົນບັງຄັບໃຊ້);
- ມີການວິເຄາະ ແລະ ແກ້ໄຂບັນຫາຕາມຄວາມເປັນຈິງ ແລະ ມີຄວາມສາມາດໃນການໝູນໃຊ້ທ່າແຮງຕ່າງໆເພື່ອໃຫ້ບັນລຸເປົ້າໝາຍ;
- ສາມາດແກ້ໄຂຂໍ້ຄັດແຍ່ງພາຍໃນ;
- ມີທ່າແຮງດ້ານສັງຄົມຢູ່ພາຍໃນກຸ່ມ (ມີປະສົບການ ແລະ ຄວາມສາມາດສະເພາະດ້ານທີ່ແຕກຕ່າງກັນ, ມີການປະສານງານ ແລະ ມີເຄືອຂ່າຍກັບຫຼາຍຂະແໜງການທີ່ແຕກຕ່າງກັນ);
- ມີຄວາມຜ່ອນສັ້ນຜ່ອນຍາວພາຍໃນກຸ່ມເພື່ອດັດປັບຕາມສະພາບການປ່ຽນແປງ.
- ນອກຈາກບັນດາຄຸນລັກຊະນະທີ່ກ່າວມາຂ້າງເທິງນັ້ນ, ການນຳພາເປັນວຽກງານໜຶ່ງທີ່ມີຄວາມໝາຍຄວາມສຳຄັນທີ່ສຸດສຳລັບກຸ່ມ ແລະ ອາດຈະເປັນປັດໃຈໜຶ່ງດຽວທີ່ຈະພາໃຫ້ປະສົບຜົນສຳເລັດໄດ້.

*ເອກະສານຊ້ອນທ້າຍ 3*

ຕົວຢ່າງ: ການສົນທະນາເພື່ອເອື້ອອໍານວຍການຈັດຕັ້ງກຸ່ມ

| ລ/ດ | ເນື້ອໃນ | ເນື້ອໃນການສົນທະນາ |
|---|---|---|
| 1 | ຈຸດປະສົງ | ເປົ້າໝາຍທີ່ກຸ່ມຢາກບັນລຸແມ່ນຫຍັງ? ຍ້ອນຫຍັງຈິ່ງຢາກຈັດຕັ້ງກຸ່ມ? |
| 2 | ສະມາຊິກ | ຈໍານວນຄົນທີ່ທີ່ຈະເປັນສະມາຊິກກຸ່ມ, ໜ້າທີ່ຮັບຜິດຊອບ, ລາຍຊື່ |
| 3 | ໂຄງຮ່າງການຈັດຕັ້ງກຸ່ມ ແລະ ຄະນະກຸ່ມ | ມີຈັກຕໍາແໜ່ງ, ໜ້າທີ່ຂອງແຕ່ລະຕໍາແໜ່ງມີຫຍັງແດ່, ສາມາດຄອງຕໍາແໜ່ງດົນປານໃດ, ຄັດເລືອກ ແລະ ເຫັນດີຈາກສະມາຊິກທຸກຄົນບໍ |
| 4 | ລະບຽບຂອງກຸ່ມ | ລະບຽບກຸ່ມຄວນປະກອບມີຫຍັງແດ່, ການແບ່ງປັນຜົນເຮັດແນວໃດ. ຕົວຢ່າງຜົນກໍາໄລ (ຖ້າມີ) |
| 5 | ກອງປະຊຸມ | ກຸ່ມຄວນຈັດກອງປະຊຸມທີ່ເປັນປູລິມະສິດຈັກຄັ້ງ? ສະຖານທີ່ປະຊຸມ, ວັນເວລາ, ຈໍານວນສະມາຊິກທີ່ເຂົ້າຮ່ວມ, ໃຜບັນທຶກກອງປະຊຸມ? |
| 6 | ການປະຕິບັດລະບຽບ | ຈະມີການປະຕິບັດລະບຽບແນວໃດຕໍ່ຫົວໜ້າກຸ່ມ ແລະ ສະມາຊິກຖ້າເຮັດວຽກບໍ່ສໍາເລັດ ຫຼື ຜິດລະບຽບ? |
| 7 | ການບັນທຶກ | ຄວນຈະບັນທຶກຫຍັງແດ່ກ່ຽວກັບກຸ່ມ ແລະ ໃຜຈະເປັນຜູ້ບັນທຶກ |
| 8 | | |
| | | |

ເອກະສາຊ້ອນທ້າຍ *4*

*ວິວັດທະນາການຂອງກຸ່ມ*

